ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຄຕຟງ ຮັບຮອງຜົນຄືບໜ້າວຽກຕ້ານການຟອກເງິນ




ກອງປະຊຸມຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ສະໄໝສາມັນ ຄັ້ງທີ I ປະຈຳປີ 2021 ໄດ້ຈັດຂຶ້ນໃນວັນທີ 17 ກຸມພາ 2021 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍການໃຫ້ກຽດເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ, ປະທານ ຄຕຟງ; ພ້ອມນີ້, ກໍ່ມີການເຂົ້າຮ່ວມຂອງບັນດາສະມາຊິກ ຄຕຟງ, ກອງເລຂາ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງຫຼາຍກະຊວງ/ທຽບເທົ່າ.

ກອງປະຊຸມຄັ້ງນີ້, ໄດ້ມີການປຶກສາຫາລືຫຼາຍບັນຫາ ໂດຍສະເພາະບັນດານິຕິກຳໃນການຄຸ້ມຄອງ ແລະ ຕິດຕາມ-ກວດກາວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຂອງຂະແໜງການຄຸ້ມຄອງຫຼືວໜ່ວຍທີ່ມີໜ້າທີ່ລາຍງານ, ການດຳເນີນການປະເມີນຄວາມສ່ຽງໂດຍນຳໃຊ້ຫຼັກການການບໍລິຫານຄວາມສ່ຽງ (Risk Based Approach “RBA” ຕໍ່ກັບອົງການບໍ່ຫວັງຜົນກຳໄລ ແລະ ການສ້າງແຜນຍຸດທະສາດແຫ່ງຊາດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປີ 2021-2025 ລວມທັງບັນຫາອື່ນທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໂດຍສະເພາະຄວາມຄືບໜ້າການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍຂອງ ສປປ ລາວ ຈາກກຸ່ມອາຊີ-ປາຊີຟິກຕ້ານການຟອກເງິນ (APG).




ການປະເມີນດັ່ງກ່າວ ໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນມີນາ ປີ 2020, ປະຈຸບັນຢູ່ໃນ ສປປ ລາວ ໄດ້ສຳເລັດການນຳສົ່ງບົດລາຍງານດ້ານນິຕິກຳ ຮອບທີ 2 ແລະ ບົດລາຍງານດ້ານປະສິດທິຜົນ ຮອບທີ 1 ພ້ອມທັງບັນດານິຕິກຳທີ່ຕິດພັນ ເປັນຕົ້ນແມ່ນ ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຫຼາຍກວ່າ 200 ສະບັບໃຫ້ທີມປະເມີນ ຊຶ່ງໄລຍະການປະເມີນ ສປປ ລາວ ຍັງຕ້ອງໄດ້ສືບຕໍ່ຈັດຕັ້ງປະຕິບັດບັນດາໜ້າວຽກທີ່ຈຳເປັນ ເປັນຕົ້ນວຽກງານທົບທວນຄືນນິຕິກຳ ແລະ ສ້າງກົນໄກຮອງຮັບຂອງບັນດາພາກສ່ວນທີ່ກ່ຽວຂ້ອງ, ວຽກງານຄຸ້ມຄອງບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານໃຫ້ມີເຄື່ອງມື ແລະ ມາດຕະການທີ່ໄດ້ມາດຖານສາກົນ ໂດຍສະເພາະຄູ່ມືວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ (Mutual Legal Assistance “MLA”) ແລະ ນິຕິກຳກ່ຽວກັບຂັ້ນຕອນການກຳນົດ ແລະ ຖອດຖອນບັນຊີລາຍຊື່ຜູ້ມີສ່ວນກ່ຽວຂ້ອງກັບການກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ສືບຕໍ່ຄົ້ນຄວ້າສ້າງແຜນຍຸດທະສາດແຫ່ງຊາດວຽກງານຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປີ 2021-2025 ເປັນຕົ້ນ.

ນອກນັ້ນ ກໍ່ຍັງຕ້ອງໄດ້ເພີ່ມທະວີການຈັດເຜີຍແຜ່ ແລະ ເຊື່ອມຊຶມ ວຽກງານການຕ້ານການຟອກເງິນໃຫ້ທັງພາກລັດ ແລະ ເອກະຊົນໃຫ້ເຂົ້າໃຈ ແລະ ຮັບຮູ້ຄວາມສ່ຽງກໍ່ຄືການປ້ອງກັນການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍ ແລະ ວຽກງານການດຳເນີນຄະດີ ຕ້ອງຮັບປະການການສືບສວນສອບສວນທາງການເງິນ ຄຽງຄູ່ກັບການສືບສວນ-ສອບສວນການກະທຳຜິດຕົ້ນ. ທັງໝົດນັ້ນກໍ່ເພື່ອຮັບປະກັນບໍ່ໃຫ້ ສປປ ລາວ ຕົກຢູ່ໃນບັນຊີການຕິດຕາມຂອງສາກົນກ່ຽວກັບວຽກງານ AML/CFT ແລະ ຮັບປະກັນໄດ້ກັບວຽກງານ AML/CFT ຂອງ ສປປ ລາວ ໃຫ້ເປັນລະບົບໄດ້ມາດຖານ ພ້ອມທັງຮັບປະກັນການຈັດຕັ້ງປະຕິບັດໄດ້.

ທັງໝົດທີ່ກ່າວມານີ້, ແມ່ນຄວາມຄືບໜ້າ ທີ່ ສປປ ລາວ ໄດ້ມີການຈັດຕັ້ງປະຕິບັດກ່ຽວກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມແຜນການທີ່ວາງໄວ້ ແລະ ກໍ່ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

## ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ